# ທີມງານການດູແລລະຫວ່າງຫຼາຍຝ່າຍໃນ Program of All-Inclusive Care for the Elderly (PACE) (ໂຄງການລວມການດູແລທັງຫມົດສໍາລັບຜູ້ສູງອາຍຸ)

## ໃຜບ້າງແດ່ຢູ່ໃນທີມງານການດູແລລະຫວ່າງຫຼາຍຝ່າຍຂອງທ່ານ?

ຖ້າມີສ່ວນຮ່ວມໃນ Program of All-Inclusive Care for the Elderly (ໂຄງການລວມການດູແລທັງຫມົດສໍາລັບຜູ້ສູງອາຍຸ) ຫຼືທີ່ຮູ້ກັນໃນຊື່ວ່າ PACE (ເພສ), ທີມງານກໍ່ຈະມາເຮັດວຽກຮ່ວມກັນເພື່ອຊ່ວຍທ່ານລະບຸການຊ່ວຍເຫຼືອທີ່ທ່ານຕ້ອງການແລະເຮັດວຽກຮ່ວມກັບທ່ານເພື່ອຈັດແຈງການບໍລິການດູແລໄລຍະຍາວ, ດ້ານສຸຂະພາບແລະບໍລິການດ້ານການແພດຂອງທ່ານ. ທ່ານເປັນຜູ້ທີ່ກໍາລັງເຂົ້າຮ່ວມໃນທີມທີ່ລວມເຖິງ, ຢ່າງຫນ້ອຍ, ທ່ານຫມໍໃນໂຄງການ PACE ຫຼືທ່ານຫມໍໃນຊຸມຊົນ, ຜູ້ຈັດການການດູແລ,ນາງພະຍາບານວິຊາຊີບ, ນັກກາຍະພາບບໍາບັດ, ນັກກິດຈະກໍາບໍາບັດ, ນັກບັນທະນາການບໍາບັດ, ນັກໂພຊະນາການ, ຜູ້ປະສານງານສູນ PACE ແລະຜູ້ປະສານງານການດູແລຢູ່ເຮືອນ. ທ່ານສາມາດເລືອກທີ່ຈະລວມສະມາຊິກໃນຄອບຄົວຫຼືຄົນທີ່ທ່ານຮັກເຂົ້າໃນທີມຂອງທ່ານໄດ້. ບາງຄັ້ງຜູ້ຄົນກໍ່ເລືອກຜູ້ຊ່ຽວຊານດ້ານອື່ນໆ, ເຊັ່ນວ່າພະນັກງານດູແລສ່ວນບຸກຄົນ, ໃຫ້ມາເຂົ້າຮ່ວມເປັນສະມາຊິກທີມຄືກັນ. ໃນໂຄງການ PACE ນີ້ ທີມງານຖືກເອີ້ນວ່າ "ທີມງານການດູແລລະຫວ່າງຫຼາຍຝ່າຍ" ("interdisciplinary team").

## ທີມງານການດູແລລະຫວ່າງຫຼາຍຝ່າຍຂອງທ່ານເຮັດຫຍັງ?

ທີມງານການດູແລລະຫວ່າງຫຼາຍຝ່າຍນີ້ວາງແຜນ, ສົ່ງມອບ, ແລະເບິ່ງແຍງການດູແລຂອງທ່ານໃຫ້ສະຖານທີ່ຕ່າງໆ ທັງຫມົດຈາກເຮືອນຂອງທ່ານໄປຮອດໂຮງຫມໍ. ທີມງານເຮັດປະເມີນຄວາມຕ້ອງການຂອງທ່ານຢ່າງສົມບູນແລະພັດທະນາແຜນການບໍລິການເພື່ອຕອບສະຫນອງຄວາມຕ້ອງການເຫຼົ່ານັ້ນ. ການບໍລິການທີ່ໄດ້ລະບຸໄວ້ໃນແຜນການຂອງທ່ານແມ່ນເຮັດໄວ້ສະເພາະທ່ານແລະເນັ້ນຫນັກໃສ່ວິທີທີ່ມີປະສິດທິພາບແລະປະຫຍັດຄ່າໃຊ້ຈ່າຍທີ່ສຸດເພື່ອຕອບສະຫນອງຄວາມຕ້ອງການແລະເປົ້າໝາຍສ່ວນບຸກຄົນຂອງທ່ານ. ທີມງານການດູແລລະຫວ່າງຫຼາຍຝ່າຍຈະອະນຸຍາດການຈ່າຍເງິນຄ່າບໍລິການຂອງທ່ານ, ແລະເບິ່ງຄຸນນະພາບການບໍລິການທີ່ທ່ານໄດ້ຮັບ.

ນີ້ແມ່ນຕົວຢ່າງຂອງທີມງານການດູແລລະຫວ່າງຫຼາຍຝ່າຍໃນໂຄງການ PACE. ບົດບາດຂອງທີມງານການດູແລລະຫວ່າງຫຼາຍຝ່າຍນີ້ແມ່ນເພື່ອຊ່ວຍເຫຼືອທ່ານໃຫ້ທ່ານບັນລຸຜົນສໍາເລັດຂອງທ່ານ. ບາງຄົນເຫຼົ່ານີ້ທ່ານເລືອກໂດຍຕົວທ່ານເອງໃຫ້ເຂົ້າຮ່ວມທີມງານຂອງທ່ານ:

